ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ: 1083 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ: 09 DEC 2016

# ຂໍ້ຕົກລົງ

**ເຖິງ:** ບັນດາທະນາຄານທຸລະກິດລັດ, ທະນາຄານທຸລະກິດລັດຮຸ້ນສ່ວນ, ທະນາຄານເອກະຊົນ, ທະນາຄານສາຂາຕ່າງປະເທດ ແລະ ຮ້ານແລກປ່ຽນເງິນຕາຕ່າງປະເທດ.

**ເລື່ອງ:** ການຂາຍເງິນຕາຕ່າງປະເທດໃຫ້ບຸກຄົນ ແລະ ນິຕິບຸກຄົນ ເພື່ອຊໍາລະສະສາງກັບຕ່າງປະເທດ.

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014.

## ທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

ການຂາຍເງິນຕາໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນ ເພື່ອຊໍາລະສິນຄ້າຕ່າງປະເທດ ໃຫ້ປະຕິບັດຕາມກົນໄກດັ່ງນີ້:

1. ການຂາຍເງິນຕາໃຫ້ແກ່ບຸກຄົນ: ອະນຸຍາດຂາຍໃຫ້ຜູ້ຕ້ອງການເງິນຕາຕ່າງປະເທດ ທີ່ເປີດບັນຊີໄວ້ທະນາຄານທຸລະກິດໃດໜຶ່ງ. ບັນຊີດັ່ງກ່າວບໍ່ສາມາດຖອນເງິນສົດເງິນຕາຕ່າງປະເທດ ຫຼື ໂອນໃຫ້ຜູ້ອື່ນຢູ່ພາຍໃນປະເທດໄດ້ ມີແຕ່ສາມາດຊໍາລະຄ່າສິນຄ້າ ແລະ ບໍລິການຢູ່ຕ່າງປະເທດໄດ້ເທົ່ານັ້ນ. ຍອດເງິນໃນບັນຊີ ບໍ່ໃຫ້ເກີນທຽບເທົ່າ 20 ລ້ານກີບທຽບເທົ່າ, ຖ້າເກີນແມ່ນບໍ່ຂາຍໃຫ້.

   ສ່ວນການຂາຍເງິນຕາຕ່າງປະເທດໃຫ້ແກ່ລູກຄ້າທີ່ເບີກຈ່າຍເປັນເງິນສົດ ອະນຸຍາດໃຫ້ຂາຍຢູ່ຕາມດ່ານຊາຍແດນສາກົນ, ດ່ານປະເພນີ, ດ່ານທ້ອງຖິ່ນ ເພື່ອນໍາໄປຊໍາລະສະສາງຄ່າສິນຄ້າ ຫຼື ບໍລິການຢູ່ຕ່າງປະເທດ ແຕ່ບໍ່ອະນຸຍາດໃຫ້ນໍາໃຊ້ເງິນຕາຕ່າງປະເທດດັ່ງກ່າວຊໍາລະສະສາງຢູ່ພາຍໃນປະເທດ.

2. ການຂາຍເງິນຕາໃຫ້ແກ່ນິຕິບຸກຄົນ: ອະນຸຍາດໃຫ້ທະນາຄານທຸລະກິດຂາຍໃຫ້ນິຕິບຸກຄົນທີ່ຕ້ອງການເງິນຕາເພື່ອຊໍາລະສະສາງຕ່າງປະເທດ ແລ້ວໂອນເຂົ້າບັນຊີສະເພາະເພື່ອໄປຊໍາລະສະສາງກັບຕ່າງປະເທດ, ບໍ່ອະນຸຍາດໃຫ້ຖອນເປັນເງິນສົດ ຫຼື ໂອນໃຫ້ຜູ້ອື່ນຢູ່ພາຍໃນປະເທດ.

3. ການຂາຍເງິນຕາຕ່າງປະເທດໃຫ້ບຸກຄົນ ແລະ ນິຕິບຸກຄົນ ຕ້ອງປະຕິບັດຕາມ ມາດຕາ 10 ເປົ້າໝາຍຂອງການນໍາໃຊ້ເງິນຕາຕ່າງປະເທດ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງ ປະເທດຢ່າງເຂັ້ມງວດ ຄື:
   - 3.1.1 ຊໍາລະຄ່າສິນຄ້າທີ່ນໍາເຂົ້າຈາກຕ່າງປະເທດ;
   - 3.1.2 ຊໍາລະຄ່າບໍລິການ ທີ່ຕິດພັນກັບສິນຄ້າຂາເຂົ້າ-ຂາອອກໂດຍກົງກັບຕ່າງປະເທດ ເຊັ່ນ: ຄ່າຂົນສົ່ງຜ່ານແດນ, ຄ່າປະກັນໄພ, ຄ່າຝາກສາງຜ່ານແດນ ແລະ ຄ່າບໍລິການອື່ນ;

3.1.3 ຊຳລະໜີ້ເງິນກູ້ ແລະ ສິນເຊື່ອການຄ້າໃຫ້ຕ່າງປະເທດ;

3.1.4 ໃຫ້ການຊ່ວຍເຫຼືອແກ່ຕ່າງປະເທດຕາມການຕົກລົງຂອງລັດຖະບານ;

3.1.5 ໂອນເງິນກຳໄລ, ເງິນປັນຜົນ, ຕົ້ນທຶນ, ດອກເບ້ຍ, ຄ່າບໍລິການອື່ນຂອງນັກລົງທຶນຕ່າງປະເທດ ແລະ ຄ່າແຮງງານຂອງຄົນຕ່າງປະເທດກັບຄືນປະເທດ;

3.1.6 ໂອນເງິນໄປລົງທຶນຢູ່ຕ່າງປະເທດ;

3.1.7 ສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບຢູ່ຕ່າງປະເທດ;

3.1.8 ປະຕິບັດເປົ້າໝາຍອື່ນ ຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ.

4. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການສະບັບເລກທີ 243/ທຫລ ລົງວັນທີ 5 ສິງຫາ 2013 ລວມທັງ ລະບຽບການໃດທີ່ຂັດກັບແຈ້ງການສະບັບນີ້ລ້ອນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

ດຣ ສົມພາວ ໄຟສິດ